# ນົກຖົວຮຽນເຮັດຮັງ

ແຕ່ປາງກ່ອນພຸ້ນ ນົກຖົວບໍ່ທັນຮູ້ເຮັດຮັງ. ພວກມັນໄຂ່ປະໄວ້ທົ່ວທີບຈຶ່ງຖືກສັດຊນິດອື່ນສັບຕອດກິນ ຫຼື ທຳລາຍຖິ້ມລ້າໆ. ເມື່ອຮອດລະດູຝົນ ແລະ ລະດູໜາວ, ພວກມັນກໍເກີດເຈັບເປັນພຍາດຕ່າງໆ ຈົນເຖິງແກ່ຄວາມຕາຍຢ່າງຫຼວງຫຼາຍ.

ຢູ່ມາມື້ນຶ່ງ, ພວກມັນໄດ້ເຕົ້າໂຮມກັນ ເພື່ອປຶກສາຫາລືແກ້ໄຂບັນຫາດັ່ງກ່າວນັ້ນ. ໃນກອງປະຊຸມ, ພວກມັນໄດ້ຕົກລົງກັນວ່າ : ພວກເຮົາຄວນໄປຮຽນເຮັດຮັງນຳນົກອັ້ຮຽງສອງຜົວເມັຽທີ່ເຮັດຮັງຢູ່ເທິງງ່າໄຮ່ທົ່ວນາ .

ພໍແຕ່ໄປຮອດ, ນົກຖົວທັງຫຼາຍກໍພາກັນສັງເກດເບິ່ງນົກອັ້ຮຽງສອງຜົວເມັຽທີ່ພວມສານຮັງຂອງຕົນຢູ່ດ້ວຍຄວາມຂຍັນໝັ່ນພຽນ. ນົກອັ້ຮຽງໂຕຜົວເປັນຜູ່ໄປຊອກຫາກິ່ງໄມ້ໃບຫຍ້າມາ ; ສ່ວນນົກອັ້ຮຽງໂຕເມັຽເປັນຜູ່ສານຮັງຄືຈັ່ງວ່າແລ້ວໄວ ແລະ ງາມແທ້ໆ. ໃນຂນະນັ້ນ ໄດ້ມີນົກຖົວໂຕນຶ່ງເອົ້າໂອ້ອວດສະຫາວຂຶ້ນວ່າ : ໂອຍ ! ເຮັດແນວນີ້ຊິຍາກຫຍັງເດ ! ໃຜຊິເຮັດບໍ່ເປັນ, ຖ້າວ່າບໍ່ເຊື່ອເຮົາຈະໄປເຮັດໃຫ້ເບິ່ງ. ຫຼັງຈາກນັ້ນ. ພວກນົກຖົວກໍພາກັນໄປເຮັດຮັງແຕ່ກໍເຮັດບໍ່ເປັນ. ພວກມັນຖຽງກັນໄປກັນມາເລີຍເຮັດຮັງບໍ່ແລ້ວຈັກເທື່ອ. ໃນທີ່ສຸດພວກມັນກໍພາກັນກັບຄືນໄປຫານົກອັ້ຮຽງສອງຜົວເມັຽນັ້ນອີກ ແລະ ໄດ້ຕັ້ງໃຈຮຽນເຮັດຮັງນຳນົກອັ້ຮຽງສອງຜົວເມັຽນັ້ນ ຈົນສາມາດເຮັດຮັງໄດ້ຢ່າງສວຍງາມ. ຕັ້ງແຕ່ນັ້ນມາ ນົກຖົວຈຶ່ງພາກັນພົ້ນຈາກພັຍພິບັດຕ່າງໆ. ແລະ ມີລູກຫຼານສືບຕໍ່ກັນມາ. ໃນຕອນທ້າຍນົກຖົວເຖົ້າຫົວຂາວຈຶ່ງເວົ້າກັບລູກຫຼານວ່າ : ນັ້ນແຫຼະລູກຫຼານເອີຍ ! ໃນໂລກນີ້ມີຫຼາຍສິ່ງຫຼາຍຢ່າງທີ່ພວກເຮົາຈະຕ້ອງໄດ້ຮຽນຮູ້, ໃນເມື່ອມີຄວາມຮູ້ແລ້ວ ເຮັດຫຍັງກໍສະດວກ ແລະ ປະສົບຜົນສຳເຣັດ ດັ່ງສຸພາສິດຂອງຊາວບູຮານກ່າວໄວ້ວ່າ :

ຄັນບໍ່ອອກຈາກບ້ານ ບໍ່ເຫັນດ່ານແດນໄກ
ຄັນບໍ່ໄປຫາຮຽນ ບໍ່ຮ່ອນມີຄວາມຮູ້.